ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0452/ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 01 ມີນາ 2012

# ຂໍ້ຕົກລົງ
# ວ່າດ້ວຍ ລະບຽບການຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກ ເຂົ້າ

- ອີງຕາມດຳລັດວ່າດ້ວຍ ການນຳເຂົ້າ ແລະ ການສົ່ງອອກສິນຄ້າ ສະບັບເລກທີ 114/ລບ, ລົງວັນທີ 6 ເມສາ 2011; ແລະ
- ອີງຕາມດຳລັດ ວ່າດ້ວຍ ຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ ສະບັບເລກທີ 180/ນຍ, ລົງວັນທີ 7 ກໍລະກົດ 2009,

**ລັດຖະມົນຕີວ່າການ ກະຊວງ ອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອກຳນົດລະບຽບການຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກ ເຂົ້າ ແລະ ເພື່ອເກັບກຳຂໍ້ມູນສະຖິຕິໃນການນຳເຂົ້າ ແລະ ສົ່ງອອກ ເຂົ້າ ໂດຍຜ່ານລະບອບການອອກໃບອະນຸຍາດ ນຳເຂົ້າ ແລະ ສົ່ງອອກ ແບບອັດຕະໂນມັດ, ແຕ່ບໍ່ໄດ້ນຳໃຊ້ໃນການຈຳກັດປະລິມານ ຫຼື ມູນຄ່າໃນການນຳເຂົ້າ ຫຼື ສົ່ງອອກ ເຂົ້າ.

**ມາດຕາ 2. ອະທິບາຍຄຳສັບ**

ໃນຂໍ້ຕົກລົງສະບັບນີ້ "ເຂົ້າ" ໝາຍເຖິງ ເຂົ້າເປືອກ, ເຂົ້າກ້ອງ, ປາຍເຂົ້າ, ເຂົ້າທີ່ສີເຄິ່ງໜຶ່ງແລ້ວ ຫຼື ສີທັງໝົດຈະຂັດ ຫຼື ບໍ່ກໍຕາມ ຊຶ່ງໄດ້ລະບຸໄວ້ໃນໝວດລະຫັດເຄົ້າ 1006 ຂອງ ສາລະບານອັດຕາພາສີ ຂອງ ສປປ ລາວ.

**ມາດຕາ 3. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ຕໍ່ ການນຳເຂົ້າ ແລະ ສົ່ງອອກ ເຂົ້າ ຢູ່ ສປປ ລາວ.

## ໝວດທີ 2
## ລະບຽບການຂໍອະນຸຍາດນຳເຂົ້າ ຫຼື ສົ່ງອອກ ເຂົ້າ

**ມາດຕາ 4. ສິດ ແລະ ເງື່ອນໄຂໃນການນຳເຂົ້າ ຫຼື ສົ່ງອອກ ເຂົ້າ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຢູ່ ສປປ ລາວ ຫຼື ຢູ່ຕ່າງປະເທດ ມີສິດນຳເຂົ້າ ຫຼື ສົ່ງອອກເຂົ້າ ໂດຍປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ.

**ມາດຕາ 5. ການຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກ ເຂົ້າ**

ການນຳເຂົ້າ ແລະ ສົ່ງອອກ ເຂົ້າ ຕ້ອງໄດ້ຮັບໃບອະນຸຍາດນຳເຂົ້າ ຫຼື ສົ່ງອອກ ເຂົ້າ ຈາກພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.

**ມາດຕາ 6. ເອກະສານປະກອບຂໍອະນຸຍາດນຳເຂົ້າ ຫຼື ສົ່ງອອກ ເຂົ້າ**

ເອກະສານທີ່ຕ້ອງປະກອບເພື່ອຂໍອະນຸຍາດນຳເຂົ້າ ຫຼື ສົ່ງອອກ ເຂົ້າ ມີດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດນຳເຂົ້າ ຫຼື ສົ່ງອອກ ເຂົ້າ;
2. ສຳເນົາຂອງເອກະສານຕາມແຕ່ລະກໍລະນີ:
   - ໃບທະບຽນວິສາຫະກິດ ຫຼື ໃບທະບຽນສຳປະທານທີ່ຖືກຕ້ອງຕາມລະບຽບກົດໝາຍ (ສຳລັບວິສາຫະກິດ ທີ່ ຢູ່ ສປປ ລາວ); ຫຼື
   - ໃບທະບຽນວິສາຫະກິດອອກໃຫ້ໂດຍທາງການຂອງປະເທດກ່ຽວຂ້ອງທີ່ຖືກຕ້ອງຕາມລະບຽບກົດໝາຍ (ສຳລັບວິສາຫະກິດທີ່ບໍ່ຢູ່ ສປປ ລາວ). ແຕ່ຕ້ອງເຮັດສັນຍາຊື້-ຂາຍເຂົ້າກັບບໍລິສັດທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດຊື້ຂາຍເຂົ້າຢູ່ ສປປ ລາວ.

ໃນກໍລະນີເອກະສານເປັນພາສາຕ່າງປະເທດຕ້ອງໄດ້ແປເປັນພາສາລາວ ໂດຍມີການຢັ້ງຢືນ ຈາກສຳນັກງານທະບຽນສານຂອງ ສປປ ລາວ.

**ມາດຕາ 7. ໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ ເຂົ້າ**

ການອອກ, ການປ່ຽນແປງ ແລະ ອາຍຸ ຂອງ ໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ ເຂົ້າ ໃຫ້ປະຕິບັດຕາມດຳລັດ 180/ນຍ ລົງວັນທີ 7 ມິຖຸນາ 2009 ວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ. ໃບອະນຸຍາດນຳເຂົ້າເຂົ້າບໍ່ສາມາດໂອນໃຫ້ຜູ້ອື່ນໄດ້.

**ມາດຕາ 9. ຄ່າທຳນຽມ ແລະ ຄ່າບໍລິການ**

ຄ່າທຳນຽມ ແລະ ຄ່າບໍລິການ ສຳລັບການອອກ ແລະ ການປ່ຽນແປງ ຂອງ ໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ ເຂົ້າ ແມ່ນໃຫ້ອີງຕາມລັດຖະບັນຍັດ ສະບັບເລກທີ 03/ປປທ ລົງວັນທີ 19 ພະຈິກ 2008 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ.

**ມາດຕາ 10. ການສະໜອງເອກະສານໃນເວລານຳເຂົ້າ ຫຼື ສົ່ງອອກ ເຂົ້າ ຕົວຈິງ**

ໃນເວລານຳເຂົ້າ ຫຼື ສົ່ງອອກ ເຂົ້າ ຕົວຈິງ, ຜູ້ນຳເຂົ້າ ຫຼື ສົ່ງອອກ ຕ້ອງສະແດງເອກະສານດັ່ງຕໍ່ໄປນີ້ໃຫ້ແກ່ເຈົ້າໜ້າທີ່ພາສີ:

1. ໃບອະນຸຍາດນຳເຂົ້າ ຫຼື ສົ່ງອອກ ເຂົ້າ ທີ່ອອກພາຍໃຕ້ຂໍ້ຕົກລົງສະບັບນີ້; ແລະ
2. ເອກະສານອື່ນໆຕາມລະບຽບການທາງພາສີ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

### ມາດຕາ 11. ການຈັດຕັ້ງປະຕິບັດ

ມອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ ເປັນເຈົ້າການໃນການປະສານສົມທົບກັບ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ສອດຄ່ອງ ແລະ ມີປະສິດທິຜົນ.

### ມາດຕາ 12. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງ 30 ວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ
ກະຊວງອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກດ